ສະຫຼຸບຜົນການດຳເນີນງານ ແລະ ລາຍງານການເຄື່ອນໄຫວ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)
ໄລຍະ 9 ເດືອນ ປີ 2026 (ສິ້ນສຸດວັນທີ 30 ກັນຍາ 2026)

ວິໄສທັດ ແລະ ພາລະກິດ: "ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ"
ທຄຕລ ໄດ້ສຸມໃສ່ພັດທະນາປັບປຸງດ້ານການບໍລິການໃຫ້ແທດເໝາະກັບການປ່ຽນແປງໃນໄລຍະໃໝ່ ໂດຍຖືເອົາລູກຄ້າເປັນໃຈກາງ; ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ ແລະ ສອດຄ່ອງຕາມຫຼັກການ BASEL II; ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ; ນຳໃຊ້ນະວັດຕະກຳໃໝ່ໃນທຸລະກິດ ຫັນສູ່ຮູບແບບ Digital Banking ຢ່າງເຕັມຮູບແບບ; ພັດທະນາລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ, ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພ Cyber Security ໄດ້ມາດຕະຖານສາກົນ; ພັດທະນາບຸກຄະລາກອນໃນແຕ່ລະດ້ານໃຫ້ມີຄວາມຊຳນິຊຳນານ, ເປັນມືອາຊີບດ້ານການບໍລິການທະນາຄານ; ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິການ; ສ້າງຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ ແລະ ປະກອບເປັນສ່ວນໜຶ່ງຂອງສັງຄົມ; ສ້າງບັນດາເງື່ອນໄຂດ້ານຕ່າງໆ ເພື່ອປະຕິບັດໄດ້ບັນດາມາດຕະຖານຂອງສາກົນ.

ຂໍ້ມູນທາງການເງິນທີ່ສຳຄັນ ໄລຍະ 9 ເດືອນ ປີ 2026
- ຊັບສິນ: 171,087 ຕື້ກີບ, ທຽບໃສ່ແຜນການປີ 2026 ປະຕິບັດໄດ້ 98.61% ທຽບໃສ່ທ້າຍປີ 2025, ເພີ່ມຂຶ້ນ 6.43%;
- ເງິນກູ້ທັງໝົດ: 69,744 ຕື້ກີບ, ທຽບໃສ່ແຜນການປີ 2026 ປະຕິບັດໄດ້ 108.98%, ທຽບໃສ່ທ້າຍປີ 2025 ເພີ່ມຂຶ້ນ 0.33%;
- ອັດຕາສ່ວນ NPL: 2.19%;
- ເງິນຝາກ: 159,732 ຕື້ກີບ, ທຽບໃສ່ແຜນການປີ 2026 ປະຕິບັດໄດ້ 99.21%, ທຽບໃສ່ທ້າຍປີ 2025 ເພີ່ມຂຶ້ນ 5.89%;
- ກຳໄລສຸດທິຫຼັງອາກອນ: 1,045 ຕື້ກີບ, ທຽບໃສ່ແຜນການປີ 2026 ປະຕິບັດໄດ້ 97.75%, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 73.33%

ແຜນງານ ແລະ ໂຄງການ
ທຄຕລ ໄດ້ພັດທະນາປັບປຸງ ແລະ ສ້າງຄວາມເຂັ້ມແຂງໝັ້ນຄົງຍືນຍົງ ກາຍເປັນທະນາຄານທີ່ນຳໜ້າໃນດ້ານຄວາມທັນສະໄໝ, ໄດ້ມາດຕະຖານສາກົນ ໃນລະບົບທະນາຄານ ໃນ ສປປ ລາວ. ທຄຕລ ໄດ້ກຳນົດຍຸດທະສາດພັດທະນາ ເພື່ອກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ເຊິ່ງແຜນງານ ແລະ ໂຄງການທີ່ຈັດຕັ້ງປະຕິບັດໃນປີ 2026 ປະກອບມີ 15 ແຜນງານ ແລະ 50 ໂຄງການ

ພາບລວມເສດຖະກິດມະຫາພາກຂອງລາວ ແລະ ທ່າອ່ຽງໃນອະນາຄົດ
ໃນໄຕມາດ 3 ປີ 2026, ອີງຕາມກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ໃນວັນທີ 5 ຕຸລາ 2026 ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ລາຍງານວ່າ: ໃນໄລຍະ 9 ເດືອນ ປີ 2026 ນີ້ ເສດຖະກິດຂອງ ສປປ ລາວ ສືບຕໍ່ຂະຫຍາຍຕົວຢູ່ໃນລະດັບ 4.8% ທຽບໃສ່ໄລຍະດຽວຂອງປີຜ່ານມາຂະຫຍາຍຕົວໃນລະດັບ 4.6% ແລະ ໃນໄຕມາດ3 ມີທ່າອ່ຽງຂະຫຍາຍຕົວ 4.4%. ຍ້ອນຂະແໜງອຸດສາຫະກຳປຸງແຕ່ງ, ການລົງທຶນຂອງພາກເອກະຊົນມີການຂະຫຍາຍຕົວ; ຂະແໜງພະລັງງານໄຟຟ້າ ກໍສືບຂະຫຍາຍຕົວດີ ເນື່ອງຈາກເລີ່ມມີການຜະລິດຈາກ ພະລັງງານລົມ; ການບໍລິການຂາຍຍົກ-ຂາຍຍ່ອຍ, ບໍລິການພາກລັດ ແລະ ການບໍລິການດ້ານທີ່ພັກອາໄສ ແລະ ອາຫານຕິດພັນກັບການທ່ອງທ່ຽວກໍຂະຫຍາຍຕົວ, ເຊິ່ງສາມາດດຶງດູດນັກທ່ອງທ່ຽວຕ່າງປະເທດ ເພີ່ມຂຶ້ນ 7% ທຽບໃສ່ໄລຍະດຽວຂອງປີຜ່ານມາ. ນອກຈາກນີ້, ພາກການສົ່ງອອກຍັງສືບຕໍ່ຂະຫຍາຍຕົວດີໃນໄລຍະ 9 ເດືອນເພີ່ມຂຶ້ນ 2.9% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ແຕ່ກໍເຫັນວ່າຂະແໜງກະສິກຳມີຄວາມສ່ຽງທີ່ຈະບໍ່ບັນລຸຄາດໝາຍຍ້ອນຄວາມຜັນຜວນຂອງລາຄານ້ຳມັນເຊື້ອໄຟເຮັດໃຫ້ຕົ້ນທຶນການຜະລິດ ແລະ ການຂົນສົ່ງເພີ່ມສູງຂຶ້ນ, ບາງກິດຈະການຊະລໍການຜະລິດ, ບວກກັບການລະບາດພະຍາດອະຫິວາໝູອາຟຣິກາ ແລະ ໄພພິບັດທຳມະຊາດທີ່ສົ່ງຜົນກະທົບຕໍ່ຂະແໜງການດັ່ງກ່າວ; ຜ່ານການຄາດຄະເນເບື້ອງຕົ້ນທ່າອ່ຽງ GDP ໝົດປີ 2026 ຈະຂະຫຍາຍຕົວໃນລະດັບ 5.1% (ມະຕິສະພາ: 5.5%).
- ຂະແໜງກະສິກຳ: ຂະຫຍາຍຕົວ 4.0% ກວມເອົາ 19.6% ຂອງ GDP ຫຼຸດຄາດໝາຍວາງໄວ້ (ມະຕິສະພາ: ຂະຫຍາຍຕົວ 4.6%, ກວມເອົາ 21.9%) ເຊິ່ງສາເຫດຕົ້ນຕໍທີ່ຈະບໍ່ໄດ້ຕາມແຜນຍ້ອນໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດນ້ຳຖ້ວມທີ່ສົ່ງຜົນໃຫ້ຜົນຜະລິດກະສິກຳໄດ້ຮັບຄວາມເສຍຫາຍໂດຍສະເພາະການຜະລິດເຂົ້າເປືອກ, ເຊິ່ງເຮັດໃຫ້ຂະແໜງປູກຝັງຂະຫຍາຍຕົວ 2.9% ຫຼຸດແຜນການວາງໄວ້ໃຫ້ຂະຫຍາຍຕົວໃນລະດັບ 4%;
- ຂະແໜງອຸດສາຫະກຳ: ຂະຫຍາຍຕົວ 5.2% ກວມເອົາ 33.0% ຂອງ GDP (ມະຕິສະພາ: ຂະຫຍາຍຕົວ 5.1%, ກວມເອົາ 31.1% ຂອງ GDP);
- ຂະແໜງບໍລິການ: ຂະຫຍາຍຕົວ 5.7% ກວມເອົາ 37.0% ຂອງ GDP ຫຼຸດຄາດໝາຍວາງໄວ້ (ມະຕິສະພາ: ຂະຫຍາຍຕົວ 6.6%, ກວມເອົາ 36.6% ຂອງ GDP), ສາເຫດຍ້ອນສະພາບຄວາມບໍ່ສະຫງົບທາງດ້ານການເມືອງ ແລະ ຄວາມບໍ່ໝັ້ນຄົງໃນພາກພື້ນຕາເວັນອອກກາງ ບວກກັບສະພາບການເໜັງຕີງຂອງລາຄານ້ຳມັນໂລກເຮັດໃຫ້ຕົ້ນທຶນຂົນສົ່ງໂດຍສານເພີ່ມຂຶ້ນ;
- ພາສີ - ອາກອນຜະລິດຕະພັນສຸດທິ: ຂະຫຍາຍຕົວ 4.4% ກວມເອົາ 10.5% (ມະຕິສະພາ: ຂະຫຍາຍຕົວ 4%, ກວມເອົາ 10.4%).

ໝາຍເຫດ: ຂໍ້ມູນຈາກບົດລາຍງານສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ, ແຜນງົບປະມານລັດ ແລະ ແຜນເງິນຕາປີ *2026* ແລະ ທິດທາງແຜນການປີ *2027* ຕໍ່ກອງປະຊຸມສະໄໝສາມັນເທື່ອທີ *02* ຂອງສະພາແຫ່ງຊາດຊຸດທີ*X*

ອັດຕາເງິນເຟີ້

ອັດຕາເງິນເຟີ້ ຂອງ ສປປ ລາວ ເດືອນກັນຍາ 2026 ແມ່ນສືບຕໍ່ເໜັງຕີງເພີ່ມຂຶ້ນຈາກເດືອນຜ່ານມາຢູ່ທີ່ ລະດັບ 7.8% (ເດືອນສິງຫາ 7.7%). ໃນນັ້ນ, ໝວດທີ່ພັກອາໄສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ ເພີ່ມຂຶ້ນ 30.7%; ໝວດການສຶກສາ ເພີ່ມຂຶ້ນ 18.8%; ໝວດຄົມມະນາຄົມ ແລະ ການຂົນສົ່ງ ເພີ່ມຂຶ້ນ 13.6%; ໝວດຮັກສາສຸຂະພາບ ແລະ ຢາ ເພີ່ມຂຶ້ນ 11.1%; ໝວດເຫຼົ້າ ແລະ ຢາສູບ ເພີ່ມຂຶ້ນ 9.5%; ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 7.6%; ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ ເພີ່ມຂຶ້ນ 6.6%.

ສາເຫດທີ່ພາໃຫ້ອັດຕາເງິນເຟີ້ ໃນ 9 ເດືອນ ປີ 2026 ເພີ່ມຂຶ້ນຕົ້ນຕໍແມ່ນມາຈາກ (1) ສະພາບຄວາມຂັດແຍ່ງ ຢູ່ຕາເວັນອອກກາງເຮັດໃຫ້ລາຄານ້ຳມັນປັບຕົວສູງຂຶ້ນ ແລະ ສົ່ງຜົນໃຫ້ລາຄານ້ຳມັນຢູ່ ສປປ ລາວ ປັບຂຶ້ນຕາມການເພີ່ມຂຶ້ນຂອງລາຄານຳເຂົ້າ, (2) ການປັບເພີ່ມຂຶ້ນລາຄາໄຟຟ້າ ແລະ ນ້ຳປະປາ, (3) ການປັບເພີ່ມຂຶ້ນຂອງບາງສິນຄ້າຕາມລະດູການ, (4) ກົນໄກໃນການຕິດຕາມການປັບຂຶ້ນ ແລະ ປັບລົງຂອງລາຄາສິນຄ້າຕາມການເພີ່ມຂຶ້ນ ແລະ ຫຼຸດລົງຂອງຕົ້ນທຶນສິນຄ້າ ແລະ ບໍລິການຢູ່ພາຍໃນຍັງບໍ່ທັນເຂັ້ມງວດ. ພ້ອມກັນນັ້ນ, ສະເພາະ ເດືອນກັນຍາ ນີ້ ສາເຫດຕົ້ນຕໍຂອງການເພີ່ມຂຶ້ນຂອງລາຄາສິນຄ້າແມ່ນມາຈາກລາຄານ້ຳມັນ, ການປັບເພີ່ມຂຶ້ນຂອງລາຄາສິນຄ້າ ແລະບໍລິການໃນໝວດການສຶກສາໃນສົກຮຽນໃໝ່ ແລະ ການປັບລາຄາສິນຄ້າຕາມລະດູການ.

ໝາຍເຫດ: ຂໍ້ມູນຈາກບົດລາຍງານ ດັດຊະນີລາຄາ ປະຈຳເດືອນ ກັນຍາ ປີ *2026*, ສູນສະຖິຕິແຫ່ງຊາດ

ອັດຕາແລກປ່ຽນ

- ໄຕມາດ 03/2026 ທຫລ ໄດ້ກຳນົດອັດຕາແລກປ່ຽນສຳລັບການຊື້ ຫຼື ຂາຍສະກຸນເງິນກີບກັບເງິນໂດລາສະຫະລັດໃນຂອບບໍ່ເກີນ ±1% ທຽບໃສ່ອັດຕາແລກປ່ຽນອ້າງອີງທີ່ກົມນະໂຍບາຍເງິນຕາປະກາດອອກໃນແຕ່ລະວັນ ແລະ ສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 2%.
- ກຳນົດໃຫ້ສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 2% ສຳລັບການແລກປ່ຽນເງິນກີບກັບເງິນບາດເງິນຢວນ, ເງິນເອີໂຣ, ເງິນເຢນ ແລະ ເງິນປອນອັງກິດ.
- ກຳນົດສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍບໍ່ເກີນ 5% ສຳລັບການແລກປ່ຽນເງິນກີບກັບສະກຸນອື່ນໆ. ອີງຕາມ ຂໍ້ຕົກລົງວ່າ ດ້ວຍການກຳນົດອັດຕາແລກປ່ຽນ ສະບັບເລກທີ 313/ທຫລ, ລົງວັນທີ 10/04/2026.
- ອັດຕາແລກປ່ຽນທົ່ວລະບົບທະນາຄານສຳລັບເງິນໂດລາສະເລ່ຍ 9 ເດືອນປີ 2026 ແມ່ນ 21,811 ກີບ/ໂດລາໃນຂະນະທີ່ອັດຕາແລກປ່ຽນນອກລະບົບສະເລ່ຍ 21,780 ກີບ/ໂດລາ. ສຳລັບອັດຕາແລກປ່ຽນເງິນບາດທົ່ວລະບົບທະນາຄານສະເລ່ຍ 662 ກີບ/ບາດ ແລະ ໃນຂະນະທີ່ອັດຕາແລກປ່ຽນນອກລະບົບສະເລ່ຍ 667 ກີບ/ບາດ

ໝາຍເຫດ:ຂໍ້ມູນຈາກ ທະນາຄານແຫ່ງ ສປປ ລາວ (ປະຈຳເດືອນກັນຍາ).

ການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຄຕລ

ໃນໄລຍະ 9 ເດືອນ ປີ 2026, ທຄຕລ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງຕົນ ຈຳນວນ 2 ຄັ້ງ (ສະຫຼຸບ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026), ຈັດກອງປະຊຸມສະພາບໍລິຫານ ທຄຕລ ລວມທັງໝົດ 6 ຄັ້ງ (ສະໄໝສາມັນ 3 ຄັ້ງ ແລະ ວິສາມັນ 3 ຄັ້ງ). ພ້ອມນີ້, ໄດ້ຮັບຮອງແຜນທຸລະກິດ ທຄຕລ ແລະ ແຜນພັດທະນາພະນັກງານ ປະຈຳປີ 2026 (ທັງກ່ອນ ແລະ ຫຼັງກອງປະຊຸມຜູ້ຖືຮຸ້ນ); ຈັດພິທີຍ້ອງຍໍ ແລະ ມອບລາງວັນຜົນງານການປະຕິບັດວຽກງານ KPI ປະຈຳປີ 2025 ຂອງສາຂາທົ່ວລະບົບ, ພ້ອມທັງສະຫຼຸບການຈັດຕັ້ງປະຕິບັດ KPI ຂອງສາຂາ ແລະ ຈັດຂັ້ນສາຂາ ແລະ ໜ່ວຍບໍລິການ ປະຈຳໄຕມາດ 2/2026; ປັບປຸງຂໍ້ກຳນົດວ່າດ້ວຍພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງ 2 ພະແນກ; ປະເມີນຜົນກະທົບການເພີ່ມຂຶ້ນຂອງລາຄານ້ຳມັນຕໍ່ແຜນທຸລະກິດ; ແລະ ຈັດພິທີປະດັບຫຼຽນກາທີ່ລະນຶກ 50 ປີ ວັນສະຖາປະນາ ສປປ ລາວ ໃຫ້ແກ່ພະນັກງານ ທຄຕລ.

ດ້ານວຽກງານຜູ້ຖືຮຸ້ນ, ຕະຫຼາດຫຼັກຊັບ ແລະ ນັກລົງທຶນ: ທຄຕລ ໄດ້ຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2025 ພ້ອມທັງອະນຸມັດຈ່າຍເງິນປັນຜົນ 200 ກີບ/ຮຸ້ນ; ສຳເລັດການເປີດເຜີຍບົດລາຍງານປະຈຳປີ 2025 ຂອງ ທຄຕລ ພ້ອມທັງ ໃບລາຍງານ Factsheet; ເປີດເຜີຍຂໍ້ມູນລົງເວັບໄຊທ໌ຕະຫຼາດຫຼັກຊັບລາວ ແລະ ເວັບໄຊທ໌ ທຄຕລ ຈຳນວນ 34 ສະບັບ; ເຂົ້າຮ່ວມເວທີ "ບໍລິສັດຈົດທະບຽນພົບປະຜູ້ລົງທຶນ" ທີ່ຕະຫຼາດຫຼັກຊັບລາວ ເພື່ອນຳສະເໜີຜົນງານທຸລະກິດ ປະຈຳປີ 2025, ໄຕມາດ 1/2026 ແລະ 6 ເດືອນຕົ້ນປີ 2026. ພ້ອມດຽວກັນນັ້ນ, ຄະນະອຳນວຍການໄດ້ເຂົ້າຮ່ວມກອງປະຊຸມສະພາບໍລິຫານ ຄັ້ງທີ 80 ແລະ ກອງປະຊຸມໃຫຍ່ຜູ້ຖືຮຸ້ນ ປະຈຳປີ 2026 ຂອງ ທະນາຄານຮ່ວມທຸລະກິດລາວ-ຫວຽດ ທີ່ ສສ ຫວຽດນາມ.

- **ດ້ານການພັດທະນາລະບົບ ແລະ ຜະລິດຕະພັນ:** ເປີດໂຕໃຫ້ບໍລິການເປີດບັນຊີເງິນຝາກອອນລາຍດ້ວຍຕົວເອງຜ່ານ BCEL One; ປັບປຸງ Customize Function ໃນ BCEL One ໃຫ້ສາມາດຕິດດາວຟັງຊັນທີ່ມັກນຳໃຊ້; ເປີດໃຫ້ບໍລິການໃບບິນ e-Bill ແລະ ລະບົບຊຳລະຄ່າໄຟຟ້າອັດຕະໂນມັດ (Auto Payment) ຮ່ວມກັບ ບໍລິສັດ ໄຟຟ້າລາວ ຜ່ານ BCEL One; ຍົກລະດັບຄວາມປອດໄພຂອງ BCEL One ພາຍໃຕ້ຄຳຂວັນແດງໝັ້ນໃຈ Red First, Red Confidence; ພ້ອມທັງເປີດຕົວຜະລິດຕະພັນບັດໃໝ່ "Mastercard Platinum Smartpay".
- **ດ້ານການຮ່ວມມືກັບພາກສ່ວນຕ່າງໆ:** ຍົກລະດັບການບໍລິການຂອງ ລັດວິສາຫະກິດການບິນລາວ ໃຫ້ທັນສະໄໝ ແລະ ຄົບວົງຈອນ; ບໍລິການຮັບຊຳລະຄ່າຊົມໃຊ້ກະແສໄຟຟ້າຜ່ານລະບົບໃບບິນທັນສະໄໝ ແລະ ຊຳລະແບບອັດຕະໂນມັດກັບ ບໍລິສັດ ໄຟຟ້າລາວ; ແລະ ລົງນາມບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືທາງທຸລະກິດ ລະຫວ່າງ ທຄຕລ ແລະ ບໍລິສັດ OceanBase ປະຈຳປະເທດສິງກະໂປ.
- **ດ້ານວຽກງານການຕະຫຼາດ:** ເປີດທັດສະນະສຶກສາໂລກການເງິນຍຸກໃໝ່ໃຫ້ນ້ອງໆເຍົາວະຊົນ 2 ໂຮງຮຽນ ທີ່ BCEL ສຳນັກງານໃຫຍ່; ຈັດ Live ສຸ່ມຫາຜູ້ໂຊກດີຈາກ 2 ໂຄງການ ຄື: Mastercard Campaign 2025 ແລະ ລາງວັນຈາກໂປຣໂມຊັ່ນ One Point; ສະໜັບສະໜູນການແຂ່ງຂັນກິລາໝາກເສິກ (Chess) ໃນລາຍການ "Chess Koff Cafe Open Rapid Chess Tournament" ທີ່ຈັດຂຶ້ນໂດຍ Vientiane Chess Academy; ແລະ ຈັດກິດຈະກຳ BCEL Exclusive Shopping Experience ສຳລັບລູກຄ້າລາຍໃຫຍ່ຂອງ ທຄຕລ ທີ່ຈັດໂດຍບໍລິສັດ Siam Piwat ທີ່ປະເທດໄທ.

ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນບາງດ້ານ ຂອງ ທຄຕລ

- ທີ່ຕັ້ງ ແລະ ເຄືອຂ່າຍ: ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 30 ກັນຍາ 2026 ທະນາຄານມີ 01 ສຳນັກງານໃຫຍ່, 7 ບໍລິສັດຮ່ວມທຶນ, 21 ສາຂາ, 101 ໜ່ວຍບໍລິການ ແລະ9 ຫ້ອງແລກປ່ຽນເງິນຕາ ທົ່ວສປປລາວ.
- ຕິດຕໍ່ ແລະ ນັກລົງທຶນສຳພັນ ສອບຖາມຂໍ້ມູນຕ່າງໆຂອງ ທຄຕລ
- ເບີໂທ (+856-21) 213200 ຫຼື ໂທ 1555
- ແຟັກ (+856-21) 213202
- ອີເມວ: bcelhqv@bcel.com.la
- ເວັບໄຊ: www.bcel.com.la

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ດຳເນີນທຸລະກິດໃນຮູບແບບບໍລິສັດມະຫາຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ທຄຕລ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ ແລະ ໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ໃນວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍກະຊວງການເງິນເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ມາຮອດວັນທີ 15 ກໍລະກົດ 2011, ກະຊວງການເງິນໄດ້ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ Compagnie Financière de la BRED (COFIBRED) ຊຶ່ງເປັນບໍລິສັດໃນເຄືອຂອງ BRED ຊຶ່ງເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ.

ໃນປີ 2017 ທຄຕລ ໄດ້ມີການເພີ່ມທຶນ ໂດຍການສະເໜີຂາຍຮຸ້ນເພີ້ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະໃຫ້ແກ່ສາທາລະນະຊົນໃນຕະຫຼາດຫຼັກຊັບລາວຕາມການອະນຸຍາດຂອງຄະນະກຳມະການຄຸ້ມຄອງຫຼັກຊັບໃນວັນທີ 17 ສິງຫາ 2017 ຊຶ່ງສາມາດເພີ່ມທຶນຈົດທະບຽນໄດ້ຕື່ມຈຳນວນ 355,728,500,000 ກີບ (71,145,700 ຮຸ້ນ) ຕາມໃບຢັ້ງຢືນຂອງຕະຫຼາດຫຼັກຊັບລາວສະບັບເລກທີ 01 /ຕລຊລ, ລົງວັນທີ 15 ກັນຍາ 2017. ດັ່ງນັ້ນ, ທຶນຈົດທະບຽນຂອງ ທຄຕລ ຈຶ່ງໄດ້ເພີ່ມຂຶ້ນຈາກເດີມ 682,888 ລ້ານກີບ ມາເປັນ 1,038,617 ລ້ານກີບ.

ເພື່ອສືບຕໍ່ພັດທະນາ ທຄຕລ ໃຫ້ເຕີບໃຫຍ່ຂະຫຍາຍຕົວຢ່າງໝັ້ນຄົງ ລັດຖະບານຈຶ່ງໄດ້ເປີດໂອກາດໃຫ້ມວນຊົນ ແລະ ນັກລົງທຶນທົ່ວໄປ ສາມາດຮ່ວມເປັນເຈົ້າຂອງ ທຄຕລ ໃຫ້ຫຼາຍຂຶ້ນດ້ວຍການຫຼຸດສັດສ່ວນການຖືຮຸ້ນຢູ່ ທຄຕລ ລົງ ເພື່ອສະເໜີຂາຍຮຸ້ນດັ່ງກ່າວໃຫ້ແກ່ຜູ້ຖືຮຸ້ນເດີມ ແລະສາທາລະນະຊົນ ເຊິ່ງໃນວັນທີ 11 ຕຸລາ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອະນຸມັດການຫຼຸດສັດສ່ວນຮຸ້ນດັ່ງກ່າວ ແລະ ອີງຕາມການຢັ້ງຢືນຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນວັນທີ 29 ພະຈິກ2019 ໄດ້ຢັ້ງຢືນວ່າ ທຄຕລ ໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງ ທຄຕລ.

ໃນວັນທີ 18 ກຸມພາ 2025 ຕະຫຼາດຫຼັກຊັບລາວໄດ້ອະນຸມັດ ການປ່ຽນແປງມູນຄ່າກຳນົດຮຸ້ນ ຫຼື ມູນຄ່າ ໜ້າຮຸ້ນ (Par Value) ຂອງ ທຄຕລ ໂດຍການແຕກຮຸ້ນອອກ (Stock Split) ຕາມອັດຕາສ່ວນ 1:5 ໝາຍຄວາມວ່າຈາກເດີມລາຄາ 5,000 ກີບ/ຮຸ້ນ ເປັນລາຄາ 1,000 ກີບ/ຮຸ້ນ, ເຮັດໃຫ້ຈຳນວນຮຸ້ນຂອງ ທຄຕລ ເພີ່ມຂຶ້ນຈາກເດີມ 207,723,300 ຮຸ້ນ ເປັນ 1,038,616,500 ຮຸ້ນ ໂດຍທຶນຈົດທະບຽນຍັງຄົງເທົ່າເດີມເພື່ອເພີ່ມສະພາບຄ່ອງຂອງການຊື້-ຂາຍຮຸ້ນຂອງ ທຄຕລ ໃນຕະຫຼາດຫຼັກຊັບລາວ ແລະ ເພື່ອເຮັດໃຫ້ນັກລົງທຶນສາມາດເຂົ້າເຖິງຮຸ້ນຂອງ ທຄຕລ ໄດ້ຫຼາຍຂຶ້ນ ດ້ວຍລາຄາທີ່ຖືກລົງ ແຕ່ໃນຂະນະດຽວກັນມູນຄ່າຫຼັກຊັບຕາມລາຄາຕະຫຼາດຍັງຄົງເດີມ ຍັງຄົງຮັກສາສັດສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນໄວ້ຕາມເດີມ.

ໃນວັນທີ 27 ສິງຫາ 2025 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອອກໃບອະນຸຍາດໃຫ້ ທຄຕລ ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ເປັນຈຳນວນຮຸ້ນ 506,255,500 ຮຸ້ນ ໃນລາຄາ 1,640 ກີບ/ຮຸ້ນ ສຳລັບຜູ້ຖືຮຸ້ນເດີມ 1,730 ກີບ/ຮຸ້ນ ສຳລັບມວນຊົນທົ່ວໄປ ແລະ ໃນວັນທີ 28 ຕຸລາ 2025 ທຄຕລ ສາມາດອອກຈຳໜ່າຍຮຸ້ນສຳເລັດ ເຊິ່ງໄດ້ຮັບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດ້ວຍມູນຄ່າລະດົມທຶນ 841,911,622,580 ກີບ ເຮັດໃຫ້ທຶນຈົດທະບຽນເພີ່ມຂຶ້ນ ຈຳນວນ 506,255,500,000 ກີບ. ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 60%, ນັກລົງທຶນພາຍໃນ ແລະ ນັກລົງທຶນຕ່າງປະເທດຖືຮຸ້ນ 30% ແລະ ຄູ່ຮ່ວມຮຸ້ນທາງຍຸດທະສາດຖືຮຸ້ນ 10%.

ທຶນຈົດທະບຽນ: ທຶນຈົດທະບຽນ ນະວັນທີ 30 ກັນຍາ 2026 ແມ່ນ 1,544,872 ລ້ານກີບ (ບໍ່ປ່ຽນແປງຈາກ ວັນທີ 30 ມິຖຸນາ 2026).

ໂຄງຮ່າງການຈັດຕັ້ງສະພາບໍລິຫານ

ສະມາຊິກສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ນະວັນທີ 30 ກັນຍາ 2026) ປະກອບ ມີ 8 ທ່ານ:



ປະທານສະພາບໍລິຫານ

ທ່ານ ສຸລິວັດ ສຸວັນນະຈູມຄຳ



ຮອງປະທານສະພາບໍລິຫານ

ທ່ານ ນາງ ບຸນຕາ ດາຣາວີ

ກຳມະການສະພາບໍລິຫານ



ທ່ານ ນາງ ສາຍສະໝອນ ຈັນທະຈັກ



ທ່ານ ປະສົມເພັດ ຄຳຕັນ



ທ່ານ ມິກາແອລ ເດີ ແຄ໋ກ

ກຳມະການສະພາບໍລິຫານອິດສະລະ



ທ່ານ ຣສ ທອງເພັດ ຈັນທະນິວົງ



ທ່ານ ນາງ ລັດດາວັນ ຊົ່ງວິໄລ



ທ່ານ ສອນໄຊ ສີລາເພັດ

ໂຄງຮ່າງການຈັດຕັ້ງຄະນະອຳນວຍການ

ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ນະວັນທີ 30 ກັນຍາ 2026) ປະກອບມີ 7 ທ່ານ:



ຜູ້ອຳນວຍການ

ທ່ານ ນາງ ສາຍສະໝອນ ຈັນທະຈັກ

ຮອງຜູ້ອຳນວຍການ



ທ່ານ ນັນທະລາດ ແກ້ວປະເສີດ



ທ່ານ ກົງສັກ ສຸພອນສີ



ທ່ານ ນາລິນ ສີລະວົງສິດ



ທ່ານ ນາງ ບົວໄພວັນ ນັນດາວົງ



ທ່ານ ນາງ ພູແສງທອງ ອານຸລັກຄຳ



ທ່ານ ສາຍຈິດ ສິມມະວົງ

ການເຄື່ອນໄຫວຂອງສະພາບໍລິຫານ ໄລຍະ 9 ເດືອນຕົ້ນປີ 2026

ໃນໄລຍະ 9 ເດືອນປີ 2026, ສະພາບໍລິຫານ ທຄຕລ ໄດ້ດຳເນີນກອງປະຊຸມ ຈຳນວນ 6 ຄັ້ງ (ສະໄໝສາມັນ 3 ຄັ້ງ ແລະ ສະໄໝວິສາມັນ ຈຳນວນ 3 ຄັ້ງ), ເຊິ່ງໄດ້ຮັບຊາບ ແລະ ຮັບຮອງບັນດາເນື້ອໃນສຳຄັນຕ່າງໆ ດັ່ງນີ້:

1. ຮັບຊາບລາຍງານການເຄື່ອນໄຫວດຳເນີນທຸລະກິດ ປະຈຳປີ 2025, ໄຕມາດ 1/2026 ແລະ ຮອດເດືອນ 08/2026.
2. ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານກວດກາພາຍໃນ ປະຈຳປີ 2025, ໄຕມາດ 01/2026 ແລະ ປະຈຳໄຕມາດ 03/2026.
3. ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ວຽກງານບາເຊວ II ໃນໄຕມາດ 4/2025, ປະຈຳປີ 2025, ໄຕມາດ 1/2026 ແລະ ປະຈຳໄຕມາດ 03/2026.
4. ຮັບຊາບລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານທາງການເງິນ (IFRS) ຂອງ ທຄຕລ ປະຈຳໄຕມາດ 03/2026.
5. ຮັບຮອງແຜນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ທຄຕລ ປະຈຳປີ 2025.
6. ຮັບຮອງບັນດາແຜນງານ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ:

- ແຜນການດຳເນີນທຸລະກິດປະຈຳປີ 2026 ແລະ ການປັບປຸງແຜນທຸລະກິດ ປະຈຳປີ 2026;
- ແຜນຈັດສັນກຳໄລຫຼັງອາກອນປະຈຳປີ 2025 ເພື່ອຈ່າຍເຂົ້າຄັງຕ່າງໆຕາມລະບຽບການ, ຈ່າຍເງິນບຳເໜັດປະຈຳປີໃຫ້ພະນັກງານ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ;
- ການປັບປຸງມູນຄ່າດັດສະນີເງິນເດືອນຂອງພະນັກງານ ທຄຕລ;
- ການປັບປຸງເອກະສານແຈ້ງເຊີນປະຊຸມສຳລັບກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025.

7. ຮັບຮອງຜົນການປະເມີນສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2025.
8. ຮັບຮອງແບບຟອມ ແລະ ວິທີການປະເມີນສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2026.
9. ຮັບຮອງດ້ານຫຼັກການ ແລະ ການປັບປຸງກົດລະບຽບຂອງ ທຄຕລ.
10. ຮັບຮອງຜົນການກວດສອບເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2025.
11. ຮັບຮອງດ້ານຫຼັກການກ່ຽວກັບການຄັດເລືອກ ແລະ ການແຕ່ງຕັ້ງຜູ້ກວດສອບອິດສະລະ ປະຈຳປີ 2026, 2027 ແລະ 2028.
12. ຮັບຮອງເອກະສານລາຍງານການເງິນກ່ອນການກວດສອບ ປະຈຳໄຕມາດທີ 1 ແລະ 3 ປະຈຳປີ 2026.
13. ຮັບຮອງການສະເໜີຂໍກູ້ຢືມເງິນຂອງລູກຄ້າສິນເຊື່ອ/ລູກຄ້າບໍລິສັດ ທີ່ຂຶ້ນກັບສິດອະນຸມັດຂອງສະພາບໍລິຫານ ຈຳນວນທັງໝົດ 16 ລາຍການ.
14. ຮັບຮອງນະໂຍບາຍ ວ່າດ້ວຍ ການຄຸ້ມຄອງຄວາມສ່ຽງດ້ານສະພາບຄ່ອງ ຂອງ ທຄຕລ.
15. ຮັບຮອງນະໂຍບາຍ ວ່າດ້ວຍ ການຄຸ້ມຄອງຄວາມສ່ຽງດ້ານຕະຫຼາດ ຂອງ ທຄຕລ.
16. ຮັບຮອງນະໂຍບາຍ ວ່າດ້ວຍ ການໃຊ້ບໍລິການຈາກພາຍນອກ ຂອງ ທຄຕລ.
17. ຮັບຮອງການປັບປຸງກົດລະບຽບຂອງສະພາບໍລິຫານ ທຄຕລ.
18. ຮັບຮອງລະບຽບ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງ ທຄຕລ (ສະບັບເລກທີ 006/ທຄຕລ.2024).
19. ຮັບຮອງການປັບປຸງນະໂຍບາຍສຳລັບພະນັກງານທີ່ລົງທ້ອງຖິ່ນ.
20. ຮັບຮອງບໍລິສັດປະເມີນຊັບສິນ ທີ່ມີສັນຍາບໍລິການປະເມີນຊັບສິນກັບ ທຄຕລ ແລະ ຮັບຮອງການເພີ່ມບໍລິສັດປະເມີນມູນຄ່າຊັບສິນພາຍນອກ ຈຳນວນ 01 ບໍລິສັດ.
21. ຮັບຮອງການແຕ່ງຕັ້ງ-ສັບຊ້ອນບຸກຄະລາກອນຈຳນວນໜຶ່ງ.

ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການ ໄດ້ເອົາໃຈໃສ່ຕິດຕາມວຽກງານຄຸ້ມຄອງຄວາມສ່ຽງ ແລະ ຄວາມຄືບໜ້າຂອງໂຄງການບາເຊວ II ຢ່າງໃກ້ຊິດ. ໃນໄລຍະ 9 ເດືອນ ປີ 2026 ໄດ້ຈັດກອງປະຊຸມທັງໝົດ 7 ຄັ້ງ ເພື່ອພິຈາລະນາ ແລະ ຮັບຮອງວຽກງານສຳຄັນ ດັ່ງນີ້:

- ດ້ານການຮັບຊາບ ແລະ ຕິດຕາມລາຍງານວຽກງານ:
  - ຮັບຊາບ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ວຽກງານ BASEL II ປະຈຳໄຕມາດ 4/2025, ໄຕມາດ 1/2026, ໄຕມາດ 2/2026 ແລະ ໄຕມາດ 3/2026.
  - ຮັບຊາບ ລາຍງານການປະເມີນຄວາມພຽງພໍຂອງທຶນພາຍໃນ (ICAAP);
- ດ້ານການອອກມະຕິ ແລະ ຮັບຮອງນະໂຍບາຍ:
  - ຮັບຮອງ ນະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງດ້ານສະພາບຄ່ອງ ແລະ ນະໂຍບາຍວ່າດ້ວຍການໃຊ້ບໍລິການຈາກພາຍນອກ;
  - ອອກມະຕິຮັບຮອງ 02 ນະໂຍບາຍຄຸ້ມຄອງຄວາມສ່ຽງສະບັບໃໝ່ (ໃນໄຕມາດ 3).

ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ

ຄະນະກຳມະການ ໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ພິຈາລະນາແຜນກຳລັງພະນັກງານ ເພື່ອປັບປຸງຕຳແໜ່ງງານຂອງ ທຄຕລ ຢ່າງຕໍ່ເນື່ອງ. ໃນໄລຍະ 9 ເດືອນ ປີ 2026, ໄດ້ຈັດກອງປະຊຸມ 4 ຄັ້ງ ພ້ອມທັງໄດ້ມີການເຮັດໜັງສືສະເໜີຜ່ານຄະນະກຳມະການ ຈຳນວນ 04 ຄັ້ງ ເພື່ອອອກມະຕິຮັບຮອງ ໃນວຽກງານສະເໜີແຕ່ງຕັ້ງພະນັກງານ ແລະ ວຽກນະໂຍບາຍຂອງພະນັກງານ, ໂດຍມີຈຸດປະສົງຫຼັກດັ່ງນີ້:

- ຮັບຮອງການສະເໜີແຕ່ງຕັ້ງ ແລະ ສັບຊ້ອນຕຳແໜ່ງງານ ໃຫ້ແກ່ພະນັກງານຈຳນວນໜຶ່ງ (ຕາມມະຕິຕົກລົງຮັບຮອງ);
- ຮັບຮອງ ແລະ ປະຕິບັດວຽກງານນະໂຍບາຍຂອງພະນັກງານ, ລວມທັງການປັບປຸງລະບຽບວ່າດ້ວຍສະຫວັດດີການຂອງພະນັກງານ ທຄຕລ ກ່ຽວກັບການຄິດໄລ່ນະໂຍບາຍອອກພັກການຮັບອຸດໜູນບຳເໜັດຂອງພະນັກງານ;
- ຮັບຮອງການປັບປຸງລະບຽບຄຸ້ມຄອງຄັງແຮສະຫວັດດີການຂອງພະນັກງານ ທຄຕລ ເພື່ອໃຫ້ສອດຄ່ອງກັບການປັບປຸງນະໂຍບາຍອອກພັກການຮັບອຸດໜູນບຳເໜັດ ແລະ ສອດຄ່ອງກັບວຽກງານການຄຸ້ມຄອງຄັງແຮສະຫວັດດີການໃນໄລຍະໃໝ່ ຕາມມາດຕະຖານບັນຊີສາກົນ (IAS 19);
- ຮັບຮອງການປັບປຸງດັດສະນີເງິນເດືອນຂອງພະນັກງານ ທຄຕລ ເພື່ອເປັນພື້ນຖານນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງ.
- ຮັບຮອງການປ່ຽນແປງເປົ້າໝາຍພະນັກງານທີ່ຈະໄປປະຈຳການເປັນຄະນະບໍລິຫານ ຂອງບໍລິສັດຮ່ວມທຶນຂອງ ທຄຕລ ຈຳນວນ 02 ທ່ານ.

ຄະນະກຳມະການຄຸ້ມຄອງບໍລິຫານ

ຄະນະກຳມະການໄດ້ຕິດຕາມ ແລະ ຊີ້ນຳການດຳເນີນທຸລະກິດຂອງ ທຄຕລ ຢ່າງໃກ້ຊິດ, ໃນໄລຍະ 9 ເດືອນ ປີ 2026 ໄດ້ຈັດກອງປະຊຸມ 4 ຄັ້ງ (ກອງປະຊຸມສະໄໝສາມັນ ແລະ ວິສາມັນ) ເພື່ອພິຈາລະນາວາລະສຳຄັນ ດັ່ງນີ້:

1. ວຽກງານກອງປະຊຸມຜູ້ຖືຮຸ້ນ:
   - ຮັບຮອງແຜນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ແລະ ບັນດາແຜນງານທີ່ນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເຊິ່ງປະກອບມີ:
     - ແຜນດຳເນີນທຸລະກິດສະບັບປັບປຸງ ປະຈຳປີ 2026.
     - ແຜນຈັດສັນກຳໄລຫຼັງອາກອນ ປີ 2025 (ສຳລັບຈ່າຍເຂົ້າຄັງຕ່າງໆ, ເງິນບຳເໜັດພະນັກງານ ແລະ ເງິນປັນຜົນໃຫ້ຜູ້ຖືຮຸ້ນ).
     - ການປັບປຸງມູນຄ່າດັດສະນີເງິນເດືອນຂອງພະນັກງານ ທຄຕລ.
     - ການປັບປຸງເອກະສານແຈ້ງເຊີນສຳລັບກອງປະຊຸມຜູ້ຖືຮຸ້ນ ປີ 2025.
2. ວຽກງານການເງິນ ແລະ ຜົນການດຳເນີນທຸລະກິດ:
   - ຮັບຊາບລາຍງານຜົນການດຳເນີນທຸລະກິດ ໄຕມາດ 1 ແລະ 3 ປະຈຳປີ 2026 ແລະ ເຫັນດີໃຫ້ນຳສະເໜີຕໍ່ສະພາບໍລິຫານ.
   - ຮັບຮອງບົດລາຍງານການເງິນ ໄຕມາດ 1 ແລະ 3 ປະຈຳປີ 2026 (ກ່ອນການກວດສອບ) ແລະ ເຫັນດີໃຫ້ນຳສະເໜີຕໍ່ສະພາບໍລິຫານ.
   - ຮັບຊາບລາຍງານການດຳເນີນທຸລະກິດ ຮອດເດືອນ 8/2026.

ຄະນະກຳມະການກວດສອບ

ຄະນະກຳມະການ ໄດ້ເອົາໃຈໃສ່ຕິດຕາມ ແລະ ຊີ້ນຳວຽກງານກວດສອບພາຍໃນຂອງ ທຄຕລ ຢ່າງເປັນປະຈຳ ໂດຍໄດ້ປະຊຸມປຶກສາຫາລື ແລະ ຮັບຮອງເນື້ອໃນສຳຄັນ ດັ່ງນີ້:

- ຮັບຊາບລາຍງານວຽກງານກວດກາພາຍໃນ ແລະ ການຕິດຕາມການແກ້ໄຂຂໍ້ພົບເຫັນ ປະຈຳປີ 2025 ແລະ ໄຕມາດ 1 ແລະ 3 ປະຈຳປີ 2026.
- ຮັບຮອງເອກະສານລາຍງານການເງິນກ່ອນການກວດສອບ ປະຈຳໄຕມາດທີ 1/2026.
- ຮັບຮອງການປັບປຸງຂອບເຂດໜ້າວຽກ (TOR) ສຳລັບການກວດສອບເອກະສານລາຍງານການເງິນ ນັບແຕ່ປີ 2026 ເປັນຕົ້ນໄປ ໂດຍມີລາຍລະອຽດຄື: ເຫັນດີໃຫ້ມີການປະມູນຄັດເລືອກ ແລະ ເຊັນສັນຍາກັບຜູ້ກວດສອບອິດສະລະ ສຳລັບໄລຍະ 3 ປີ (2026, 2027 ແລະ 2028) ເພື່ອຮັບປະກັນຄວາມຕໍ່ເນື່ອງ ແລະ ນັບແຕ່ປີ 2026 ເປັນຕົ້ນໄປ ແມ່ນໃຫ້ໂຈະການສ້າງບົດລາຍງານ 3 ສະບັບຄື: ບົດລາຍງານທົບທວນຄືນເອກະສານລາຍງານການເງິນ ຕາມມາດຕະຖານລາວ (LAS) ປະຈຳ 6 ເດືອນຕົ້ນປີ; ບົດລາຍງານທົບທວນຄືນຜົນການດຳເນີນງານ (Operational Review Report) ປະຈຳປີ; ແລະ ບົດລາຍງານທົບທວນຄືນຖານະເງິນກູ້ (Loan Review Report) ປະຈຳປີ.
- ຮັບຮອງເອົາບໍລິສັດ PWC ເປັນຜູ້ກວດສອບອິດສະລະ ຂອງ ທຄຕລ ປະຈຳປີ 2026, 2027 ແລະ 2028.

ຄວາມຮັບຜິດຊອບຕໍ່ສັງຄົມ

ຄຽງຄູ່ກັບການດຳເນີນທຸລະກິດ, ຄະນະຜູ້ບໍລິຫານ ແລະ ພະນັກງານ ທຄຕລ ໄດ້ໃຫ້ຄວາມສຳຄັນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານຊ່ວຍເຫຼືອສັງຄົມ ໂດຍໄດ້ນຳໃຊ້ທ່າແຮງດ້ານເຕັກໂນໂລຊີ ແລະ ນະວັດຕະກຳທີ່ທັນສະໄໝ ເຂົ້າມາຊ່ວຍໃນການບໍລິຫານຈັດການ ເພື່ອສ້າງຜົນປະໂຫຍດໃຫ້ແກ່ສັງຄົມຢ່າງບໍ່ຫວັງຜົນຕອບແທນ, ເຊິ່ງມີຜົນງານພົ້ນເດັ່ນດັ່ງນີ້:

1. ໂຄງການຊ່ວຍເຫຼືອສັງຄົມຜ່ານລະບົບດີຈິຕອນ "BCEL One Heart": ເຊິ່ງແມ່ນລະບົບທີ່ໃຊ້ງານງ່າຍ, ສະດວກ, ວ່ອງໄວ ແລະ ທີ່ສຳຄັນ ແມ່ນ ມີຄວາມໂປ່ງໃສສູງ ຍ້ອນສາມາດກວດສອບທຸກຂັ້ນຕອນການຮັບ-ມອບເງິນບໍລິຈາກໄດ້, ເຮັດໃຫ້ໄດ້ຮັບຄວາມເຊື່ອໝັ້ນຈາກສັງຄົມຢ່າງແທ້ຈິງ.
   - ຜົນງານໃນໄລຍະ 9 ເດືອນ ປີ 2026: ມີໂຄງການທີ່ເປີດຮັບການຊ່ວຍເຫຼືອ ຈຳນວນ 27 ໂຄງການ, ມີການຮ່ວມບໍລິຈາກທັງໝົດຫຼາຍກວ່າ 7,000 ຄັ້ງ ແລະ ສາມາດລະດົມທຶນຊ່ວຍເຫຼືອໄດ້ລວມມູນຄ່າຫຼາຍກວ່າ 586 ລ້ານກີບ.
2. ການອຸປະຖຳ ແລະ ຊ່ວຍເຫຼືອສັງຄົມໂດຍກົງ: ນອກຈາກໂຄງການ One Heart ແລ້ວ, ທຄຕລ ຍັງໄດ້ໃຫ້ການຊ່ວຍເຫຼືອສັງຄົມໂດຍກົງ ທັງໃນຮູບແບບເງິນສົດ ແລະ ວັດຖຸອຸປະກອນ ຕາມການສະເໜີຂອງພາກລັດ ແລະ ເອກະຊົນ ໂດຍກວມເອົາຫຼາຍຂະແໜງການ ເຊັ່ນ: ສະໜັບສະໜູນວຽກງານການສຶກສາ ແລະ ກິລາ, ວຽກງານສາທາລະນະສຸກ, ວຽກງານຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ວຽກງານຊຸກຍູ້ວັນບຸນສຳຄັນຕ່າງໆຂອງຊາດ ແລະ ອື່ນໆ ໃນໄລຍະດັ່ງກ່າວ ໄດ້ໃຫ້ການຊ່ວຍເຫຼືອລວມທັງໝົດຫຼາຍກວ່າ 2,700 ລ້ານກີບ.

ຜູ້ອຳນວຍການ